ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 3455/ກປ

ນະຄອນຫຼວງວຽງຈັນ, ວັນທີ 26/08/19

## ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍການກຳນົດພືດບຸລິມະສິດ ສຳລັບເຈລະຈາເຕັກນິກເປີດຕະຫຼາດ

## ເພື່ອສົ່ງອອກ ຈາກ ສປປ ລາວ ໄປຍັງ ສປ ຈີນ

-ອີງຕາມກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ, ສະບັບເລກທີ 13/ສພຊ,ລົງວັນທີ 15 ພະຈິກ2016;

-ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;

-ອີງຕາມການສະເໜີຂອງກົມປູກຝັງ, ສະບັບເລກທີ................./ກປຝ, ລົງວັນທີ.....................

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ ດັ່ງນີ້:**

ມາດຕາ 1. ກຳນົດ ບັນຊີພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ສຳລັບ ເຈລະຈາເຕັກນິກເປີດຕະຫຼາດ ເພື່ອສົ່ງອອກ ໄປຍັງ ສປ ຈີນ ຕາມເອກະສານຄັດຊ້ອນທ້າຍ 1 ແລະ 2 ມາພ້ອມນີ້;

ມາດຕາ 2. ມອບໃຫ້ກົມປູກຝັງໃນນາມເປັນອົງການປ້ອງກັນຊາດແຫ່ງຊາດ (NPPO) ຂອງ ສປປ ລາວ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ພ້ອມທັງແຈ້ງໃຫ້ອົງການປ້ອງກັນພືດແຫ່ງຊາດ ແລະ ອົງການບໍລິຫານພາສີ, ສປ ຈີນ ກ່ຽວກັບ ບັນຊີພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ລວມທັງອອກບົດແນະນຳ ແລະ ຄູ່ມືວິຊາການ ກ່ຽວກັບ ຫຼັກການ ແລະ ວິທີການຈັດຕັ້ງປະຕິບັດລະອຽດ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

ມາດຕາ 3. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້

ປອ.ລຽນ ທິແກ້ວ

ບ່ອນສົ່ງ:

- ຮອງລັດຖະມົນຕີກະຊວງ ກປ ທ່ານລະ 01 ສະບັບ
- ກົມ, ກອງ ແລະ ສະຖາບັນ ອ້ອມຂ້າງ ກະຊວງ ກປ ບ່ອນລະ 01 ສະບັບ
- ກົມແຜນການ ແລະ ການເງິນ 01 ສະບັບ
- ກົມນະໂຍບາຍການຄ້າຕ່າງປະເທດ (ຫ້ອງການແຈ້ງເຕືອນວຽກງານ SPS) 01 ສະບັບ
- ພະແນກ ກປ ແຂວງ, ນະຄອນຫຼວງ 01 ສະບັບ
- ຂະແໜງປູກຝັງ ແຂວງ, ນະຄອນຫຼວງ 01 ສະບັບ
- ດ່ານກັກກັນພືດ 01 ສະບັບ
- ສຳເນົາເກັບມ້ຽນ 01 ສະບັບ

Scanned with CamScanner

**ເອກະສານຊ້ອນທ້າຍ 02 (Annex 02):**

**ບັນຊີພືດ ແລະ ຜະລິດຕະພັນພືດ ບູລິມາສິດສໍາຄັນອັນດັບສອງ ສໍາລັບເຈລະຈາເຕັກນິກ ເປີດຕະຫຼາດ ເພື່ອສົ່ງອອກ ຈາກ ສປປ ລາວ ໄປຍັງ ສປ ຈີນ ສົກປີ 2019-2020**

**(Second priority crops for Technical Market Access export from Lao PDR to PR. China in 2019-2020)**

| ອັນດັບ<br>No. | ຊື່ພືດ<br>Common name | ຊື່ວິທະຍາສາດ<br>Scientific name |
|---|---|---|
| 1 | ຊາຕົ້ມ (Tea) | *Camellia* spp. |
| 2 | ໝາກເດືອຍ (Job's tears) | *Coix lacryma-jobi* |
| 3 | ຢາງພາລາ (Rubber) | *Hevea brasiliensis* |
| 4 | ໝາກແຕງ (Melon) | *Cucumis* spp. |
| 5 | ໝາກພ້າວ (Coconut) | *Cocos nucifera* L. |
| 5 | ໝາກນັດ (Pine apple) | *Ananas comosus* L. |
| 6 | ໝາກຫຸ່ງ (Papaya) | *Carica papaya* |
| 7 | ໝາກເງາະ (Rambutan) | *Nephelium lappaceum* L. |
| 8 | ໝາກສີດາ (Guava) | *Psidium guajava* L. |
| 9 | ອ້ອຍ (Sugarcane) | *Saccharum officinarum* |
| 10 | ໝາກນາວ (Lime) | *Citrus* sp. |
| 11 | ສາລີຫວານ (Sweet corn) | *Zea mays* L. |
| 12 | ໝາກແໜ່ງ (Cardamom) | *Amomum* spp. |
| 13 | ພືດຜັກອື່ນໆ (Vegetables) | |

ໝາຍເຫດ: ບັນຊີພືດ ແລະ ຜະລິດຕະພັນພືດ ຈະມີການປັບປຸງໃນແຕ່ລະໄລຍະ

ປອ.ລຽນ ທິແກ້ວ

Scanned with CamScanner

**ເອກະສານຊ້ອນທ້າຍ 01 (Annex 01):**

**ບັນຊີພືດ ແລະ ຜະລິດຕະພັນພືດບູລິມາສິດສຳຄັນອັນດັບໜຶ່ງ ສຳລັບເຈລະຈາເຕັກນິກ ເປີດຕະຫຼາດ ເພື່ອສົ່ງອອກ ຈາກ ສປປ ລາວ ໄປຍັງ ສປ ຈີນ ສົກປີ 2019-2020**

**(First priority crops for Technical Market Access export from Lao PDR to PR. China in 2019-2020)**

| ອັນດັບ<br>No. | ຊື່ພືດ<br>Common name | ຊື່ວິທະຍາສາດ<br>Scientific name |
|---|---|---|
| 1 | ມັນດ້າງ (Sweet potato) | *Ipomoea batatas* (L.) |
| 2 | ຢາສູບ (Tobacco) | *Nicotiana tabacum* L. |
| 3 | ໝາກມີ້ (Jackfruit) | *Artocarpus* spp. |
| 4 | ລຳໃຍ (Longan) | *Euphoria longana* L |
| 5 | ຖົ່ວລຽນ (Durian) | *Durio zibethinus* L. |
| 6 | ໝາກນອດ (Passion fruit) | *Passiflora edulis.* |
| 7 | ໝາກກ້ຽງ (Mandarin, orange) | *Citrus* spp. |
| 8 | ໝາກພຸກ ຫຼື ໝາກສົ້ມໂອ (Pomelo) | *Citrus maxima* |
| 9 | ໝາກມັງກອນ (Dragon fruit) | *Hylocereus undatus* (H.) |
| 10 | ພືດຜັກອື່ນໆ (Vegetables): | |
| | - ໝາກເຜັດອື່ນໆ (Chilli, peppers) | *Capsium* spp. |
| | - ຖົ່ວເຫຼືອງ (Soybean) | *Glycine max* (L.) |
| | - ຖົ່ວຂຽວ (Mungbean) | *Arachis hypogaea* L. |
| | - ຖົ່ວດິນ (Peanut) | *Vigna radiata* (L.) |
| | - ຖົ່ວອື່ນໆ: ຖົ່ວແປ,ຖົ່ວເບີ,ຖົ່ວລາຍ, ຖົ່ວນ້ອຍ... (Bean etc.) | *Phaseolus* spp. |
| | - ຜັກກາດຫົວ (White reddish) | *Raphanus sativas* |
| | - ສະກຸນກະລ່ຳ (Cabbages) | *Brassica* spp |
| | - ໝາກອຶ (Pumpkin) | *Cucurbita maxima* |
| | - ໝາກເຂືອ (Eggplant) | *Solanum* spp. |
| | - ໝາກເລັ່ນ (Tomato) | *Solanum lycopersicum* |

ໝາຍເຫດ: ບັນຊີພືດ ແລະ ຜະລິດຕະພັນພືດ ຈະມີການປັບປຸງໃນແຕ່ລະໄລຍະ

ປອ.ລຽນ ທິແກ້ວ

Scanned with CamScanner